## Attachment 3: Approval Letters

### 3.1 The request letter of PSL PHD to LRF

*ແຂວງຜົ້ງສາລີ, ສປປ ລາວ*
*ພະແນກສາທາລະນະສຸກ ແຂວງຜົ້ງສາລີ*

*ໂທ. +856-88-210041*
*ແຟັກ. +856-88-210041*
*ມືຖື: +856-20-22200201*

**ມູນນິທິຟື້ນຟູສຸຂະພາບລາວ** (Lao Rehabilitation Foundation)
P.O. Box 27
Napa, CA 94559
Ph. 707 265 6555
Fax. 707 265 6566

30 ກັນຍາ, 2014

**ຮຽນ ທ່ານປະທານມູນນິທິ ຟື້ນຟູສຸຂະພາບລາວ,**

ໃນຫຼາຍປີຜ່ານມາ ພະແນກສາທາລະນະສຸກແຂວງຜົ້ງສາລີ ໄດ້ຮ່ວມມືກັບ ມູນນິທິຟື້ນຟູສຸຂະພາບລາວ ໃນການຊ່ວຍເຫຼືອ ກວດ ແລະ ປິ່ນປົວຄົນເຈັບ ຢູ່ເຂດຊົນນະບົດບັນດາເມືອງຕ່າງໆ ແລະ ໃນຊ່ວຍເຫຼືອເຄື່ອງມືອຸປະກອນການແພດ ເພື່ອພັດທະນາການບໍລິການຄົນເຈັບ ໃຫ້ແກ່ໂຮງໝໍເມືອງ ແລະ ໂຮງໝໍແຂວງ. ຊຶ່ງທັງໝົດນັ້ນ ເປັນການສ້າງຜົນປະໂຫຍດອັນໃຫຍ່ຫຼວງທີ່ໄດ້ຊ່ວຍເຫຼືອຄົນເຈັບ ແລະ ການພັດທະນາເສດຖະກິດສັງຄົມ ຂອງແຂວງຜົ້ງສາລີ.

ການຊ່ວຍເຫຼືອຄົນເຈັບ ຈຳນວນ 3,772 ຂອງມູນນິທິຟື້ນຟູສຸຂະພາບລາວ ຄັ້ງທີ່ຜ່ານມາໃນເດືອນກຸມພາ 2014 ທີ່ 3 ເມືອງຂອງແຂວງຜົ້ງສາລີ (ເມືອງໃໝ່, ສຳພັນ ແລະ ບຸນໃຕ້) ປະກອບມີພະຍາດ ແຂ້ວ, ຕາ, ຫູ-ດັງ-ຄໍ, ພະຍາດພາຍໃນ, ແມ່ມານ ແລະ ເດັກນ້ອຍ. ເຖິງຢ່າງໃດກໍຕາມ ຍັງມີຄົນເຈັບຈຳນວນຫຼວງຫຼາຍທີ່ດຳລົງຊີວິດຢູ່ເຂດຊົນນະບົດ ຍັງບໍ່ທັນໄດ້ຮັບການດູແລະ ຮັກສາສຸຂະພາບເທົ່າທີ່ຄວນ ເນື່ອງຈາກວ່າ:

- ງົບປະມານຂອງລັດຖະບານຍັງຈຳກັດ ໃນການປິ່ນປົວຕາ, ຫູ-ດັງ-ຄໍ, ແຂ້ວ, ແມ່ມານ ແລະ ເດັກນ້ອຍຢູ່ເຂດຊົນນະບົດ.
- ຂາດບຸກຄະລາກອນ ແລະ ເຄື່ອງມືອຸປະກອນການແພດ ໃນລະດັບຂັ້ນໂຮງໝໍເມືອງ.
- ຄວາມຮັບຮູ້ຂອງພໍ່ແມ່ປະຊາຊົນຢູ່ເຂດຊົນນະບົດ ໃນການຮັກສາສຸຂະພາບຂັ້ນຕົ້ນ ຍັງຕ່ຳ.
- ຄົນເຈັບບາງຈຳນວນ ຍັງຊື່ຖືປິ່ນປົວ ແບບປະເພນີ.

ດ້ວຍເຫດນັ້ນ, ທາງພະແນກສາທາລະນະສຸກແຂວງຜົ້ງສາລີ ແມ່ນມີຄວາມຕ້ອງການດຳເນີນ ກິດຈະກຳການຮັກສາສຸຂະພາບ ໃຫ້ແກ່ພໍ່ແມ່ປະຊາຊົນ ຢູ່ເຂດຊົນນະບົດ ແລະ ມີຄວາມຈຳເປັນຕ້ອງການເຄື່ອງມືອຸປະກອນການແພດ ທີ່ສຳຄັນ ໃຫ້ແກ່ໂຮງໝໍເມືອງ 3 ເມືອງ ແລະ ບາງສຸກສາລາ, ລາຍລະອຽດມີລາຍການເຄື່ອງມືອຸປະກອນຕິດຂັດ.

ເປົ້າໝາຍຂອງກິດຈະກຳໃນຄັ້ງນີ້ ຈະຊ່ວຍເຫຼືອພໍ່ແມ່ປະຊາຊົນຫຼາຍກວ່າ 3,000 ຄົນ, ປະກອບມີພະຍາດ ຕາ,

ດັ່ງນັ້ນ, ຂໍຕາງໜ້າພໍ່ແມ່ປະຊາຊົນຜູ້ມີຄວາມຕ້ອງການຊ່ວຍເຫຼືອທັງໝົດ ຂໍຄວາມຊ່ວຍເຫຼືອສະໜອງແພດຊ່ຽວຊານ ຕາ, ຫູ-ດັງ-ຄໍ, ແຂ້ວ, ແມ່ມານ, ເດັກນ້ອຍ ແລະ ພາຍໃນ ພ້ອມເຄື່ອງມືອຸປະກອນການແພດ ທີ່ເປັນຜົນປະໂຫຍດສຳຄັນ ໃນການຊ່ວຍເຫຼືອຄັ້ງນີ້ດ້ວຍ.

ທາງພະແນກສາທາລະນະສຸກຂໍສະແດງຄວາມຮູ້ບຸນຄຸນອັນລົ້ນເຫຼືອ ໃນການໃຫ້ການຊ່ວຍເຫຼືອຂອງທ່ານ ກັບກິດຈະກຳໃນຄັ້ງນີ້ ປະກອບມີ ຢາ, ເຄື່ອງມືອຸປະກອນການແພດທີ່ຕ້ອງການ, ການເດີນທາງ ແລະ ກິນຢູ່ພັກເຊົາຂອງທີມງານ ໃນເວລາຈັດຕັ້ງປະຕິບັດ. ພະແນກສາທາລະນະສຸກມີຄວາມຍິນດີອຳນວຍຄວາມສະດວກໃນການປະກອບເອກະສານເພື່ອຂໍອະນຸມັດ ໄປຕາມຂັ້ນຕ້ອນ ແລະ ຈັດສະຖານທີ່ບໍລິການຢູ່ບັນດາ 3 ເມືອງເປົ້າໝາຍ.

ຫວັງສະເໝີວ່າ ຈະໄດ້ຮັບການຮ່ວມມືຈາກທ່ານໃນໄວໆ ນີ້.

ດ້ວຍຄວາມນັບຖືເປັນຢ່າງສູງ.

ຫົວໜ້າພະແນກສາທາລະນະສຸກແຂວງຜົ້ງສາລີ

ດຣ.ພອນປະດິດ ທິບມະນີວົງ

Dr.Phonepadith THIPMANIVONG

## 3.2 The agreement letter of LRF to provide mobile health care

LAO REHABILITATION FOUNDATION, Inc.
ມູນລະນິທິຟື້ນຟູສຸຂະພາບລາວ

USA: 86 El Nido Dr, CA 94559, USA * Tel: +1 707 486 0660 * Fax: +1 707 255 6787 * www.lao-foundation.org

October 13, 2014

Dr. Phonepadith Thipmanivong
Deputy Director of Phongsaly Provincial Department of Health
Tel/Fax: + 856 -88-210041

CC: Dr. Indara Phetsamone, Ms Sasithone Sengchanh

Dear Dr. Phonepadith Thipmanyvong,

Thank you for your good requests letter for mobile health care and medical equipment.

Headquartered in California, USA, Lao Rehabilitation Foundation, Inc. (LRF) is a non-profit, non-religious, non-political organization. Activities of the foundation in Laos are conducted by its President Dr. Luc Janssens. The purpose of LRF is to provide medical services to Laotian citizens, with a greater focus on children. The Foundation has conducted several missions in remote area of the Northern provinces in the past, providing medical services to over 30,000 poor patients. The Foundation has also provided mobile medical equipment for dental, E.N.T and eye care in 4 Northern provinces that included Phongsaly province in 2009, 2010 and 2014.

The Lao Rehabilitation Foundation is pleased to inform you of our agreement to provide the necessary funds for this mission, including transportation, accommodation, mobile medical equipment, medicine and other necessities for the mission in Phongsaly province on 2-12 of February, 2015. We are pleased to provide the mission at three locations, Yord-Ou, Bounneu (Ban Yor Health Center) and Samphan District Hospitals of Phongsaly Province. We will gladly consider providing some equipment to the places where we conduct the mission: Yord-Ou, Samphan and Bounneua (Ban Yor Helth Center). It should be noted that LRF will provide equipment only when need and ability to use the equipment are clearly demonstrated.

Our goal is to provide eye, dental, internal medicine, obstetric and pediatric services to all patients free of charge, with no regard to gender, age, ethnic background or religion while developing the skills of Lao medical personnel by collaborating with US doctors with expertise in the fields of dental care, pediatric care, internal medicine and expectant mother examination by ultrasound scanning.

In addition to me and my Lao staff, our team will include 5 US physicians with expertise in: internal medicine, pediatric care, dental care, ENT and radiology (please see attach files for details).

We kindly request that you provide us with an official agreement to conduct this medical mission at Samphan and Yord-Ou District Hospitals and Ban Yor Health Center at these dates and that you provide the necessary appointment information to patients and staff at these locations.

Should you need any additional information or have any inquiries please contact me at email: janssens@sonic.net or contact Dr. Phetsamone Indara by phone 22203708 or email: inda_oph@yahoo.com

We are looking forward to receiving soon the official approval for this mission.

Yours sincerely,

LAO REHABILITATION FOUNDATION, INC. • CALIFORNIA, USA • LRF

Dr. Luc Janssens, President LRF

ATTACHMENTS:

1. Schedule of Activities
2. Names of US Team

### 3.3 The agreement letter of Phongsaly governor

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ແຂວງຜົ້ງສາລີ
ເຈົ້າແຂວງ

ເລກທີ 153 /ຈຂ.ຜລ

ຜົ້ງສາລີ, ວັນທີ 13 ພະຈິກ 2014

**ຮຽນ: ທ່ານລັດຖະມົນຕີ ວ່າການ ກະຊວງສາທາລະນະສຸກ ທີ່ນັບຖື.**

**( ໂດຍຜ່ານກົມປິ່ນປົວ ແລະ ຫ້ອງການ ກະຊວງສາທາລະນະສຸກ )**

**ເລື່ອງ: ຂໍອະນຸມັດວີຊາໃຫ້ທີມງານຂອງມູນນິທິຟື້ນຟູສຸຂະພາບ** (LaoRehabiLitation Foundation, USA) **ໂດຍສົມທົບກັບທີມງານແພດ ຈາກໂຮງໝໍແຂວງຜົ້ງສາລີ ແລະອຸດົມໄຊເຂົ້າມາປິ່ນປົວບໍ່ເສຍຄ່າໃນການກວດ ແລະ ປິ່ນປົວພະຍາດ, ແຂ້ວ, ຕາ,ພະຍາດທົ່ວໄປ, ກວດແມ່ມານ ແລະເດັກນ້ອຍ 2ເມືອງ ແລະ 1 ສຸກສາລາ ຂອງແຂວງຜົ້ງສາລີ.**

- ອີງໃສ່ຈົດໝາຍຮັບຮອງການຊ່ວຍເຫຼືອລ້າຂອງມູນລະນິທິຟື້ນຟູສຸຂະພາບລາວ ລົງວັນທີ 13 ຕຸລາ 2014.
- ອີງໃສ່ຂໍ້ຫຍຸ້ງຍາກ ແລະ ຄວາມຕ້ອງການໃນວຽກງານການພັດທະນາບຸກຄະລາກອນໃຫ້ເຂັ້ມແຂງດ້ານສາທາລະນະສຸກຂອງແຂວງຜົ້ງສາລີ ໂດຍສະ ເພາະແມ່ນຢູ່ຂັ້ນໂຮງໝໍເມືອງ.
- ອີງໃສ່ໜັງສືສະເໜີຂອງພະແນການຕ່າງປະເທດແຂວງຜົ້ງສາລີສະບັບເລກທີ 295/ພຕທ.ຜລ, ລົງວັນທີ 13 ພະຈິກ 2014.

ເຈົ້າແຂວງຜົ້ງສາລີຖືເປັນກຽດຮຽນສະເໜີມາຍັງທ່ານ ຊ່ວຍຄົ້ນຄວ້າພິຈາລະນາຂໍອະນຸມັດໃຫ້ມູນນິທິຟື້ນຟູສຸຂະພາບ (LaoRehabilitationFoundation, USA) ໃຫ້ວີຊາທີມງານແພດຊ່ຽວຊານຈາກອາເມລິກາ, ໂດຍມີປະທານມູນນິທິແລະແພດຊ່ຽວຊານຈາກຕ່າງປະເທດ ລວມຈໍານວນ 6 ທ່ານ (ລາຍລະອຽດມີບັນຊີລາຍຊື່ຊ້ອນທ້າຍ).

ສະນັ້ນ, ຈຶ່ງຮຽນມາຍັງທ່ານເພື່ອຄົ້ນຄວ້າພິຈາລະນາຕາມຄວາມເໝາະສົມດ້ວຍ.

**ດ້ວຍຄວາມນັບຖືຢ່າງສູງ.**

[illegible] **ເຈົ້າແຂວງ**

**ແພງ ລີລາວົງ**

### 3.4 The agreement letter of Minister, Ministry of Health

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

ເລກທີ 267 /ສທ

ນະຄອນຫຼວງວຽງຈັນ, ວັນທີ 05 DEC 2014

ຮຽນ : ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການຕ່າງປະເທດ.

ເລື່ອງ: ຂໍອະນຸມັດ ວີຊາເຂົ້າ ສປປ ລາວ ໃຫ້ແກ່ທີມງານແພດຊ່ຽວຊານ ຂອງມູນນິທິຟື້ນຟູສຸຂະພາບລາວ (Lao Rehabition Foundation) ຈາກປະເທດສະຫະ ລັດອາເມລິກາ, ທີ່ຈະເຂົ້າມາປິ່ນປົວບໍ່ເສຍຄ່າໃນການກວດ ແລະ ປິ່ນປົວພະຍາດແຂ້ວ, ຫູ-ດັງ-ຄໍ, ຕາ, ແມ່ມານ, ຜູ້ໃຫຍ່ ແລະ ເດັກນ້ອຍ ທີ່ເມືອງຍອດອູ, ເມືອງສຳພັນ ແລະ ສຸກສາລາບ້ານຍໍ້ ເມືອງບຸນເໜືອ ແຂວງ ຜົ້ງສາລີ.

- ອີງຕາມ ໃບອະນຸມັດປະຕິບັດງານຂອງກະຊວງການຕ່າງປະເທດ ສະບັບເລກທີ 60/AE.OI.3 ລົງວັນທີ 31 ກໍລະກົດ 2014.
- ອີງຕາມ ໃບສະເໜີຂອງກົມປິ່ນປົວ ສະບັບເລກທີ 1549/ກປປ, ລົງວັນທີ 20 ພະຈິກ 2014.

ກະຊວງສາທາລະນະສຸກ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ເພື່ອຂໍອະນຸມັດ ວີຊາເຂົ້າ ສປປ ລາວ ໃຫ້ແກ່ທີມງານແພດຊ່ຽວຊານ ຂອງມູນນິທິຟື້ນຟູສຸຂະພາບລາວ (Lao Rehabition Foundation) ຈາກປະເທດສະຫະລັດອາເມລິກາ, ທີ່ຈະເຂົ້າມາປິ່ນປົວບໍ່ເສຍຄ່າໃນການກວດ ແລະ ປິ່ນປົວພະຍາດແຂ້ວ, ຫູ-ດັງ-ຄໍ, ຕາ, ແມ່ມານ, ຜູ້ໃຫຍ່ ແລະ ເດັກນ້ອຍ ທີ່ເມືອງຍອດອູ, ເມືອງສຳພັນ ແລະ ສຸກສາລາບ້ານຍໍ້ ເມືອງບຸນເໜືອ ແຂວງ ຜົ້ງສາລີ ໂດຍສົມທົບກັບທີມງານແພດ ຈາກໂຮງໝໍແຂວງຜົ້ງສາລີ ແລະ ອຸດົມໄຊ. ການປະຕິບັດວຽກງານຂອງພວກກ່ຽວ ເລີ່ມແຕ່ວັນທີ 03 ກຸມພາ 2015 ຫາ ວັນທີ 11 ກຸມພາ 2015, ພວກກ່ຽວຈະເຂົ້າມາ ສປປ ລາວ ທີ່ ດ່ານສະໜາມບິນສາກົນວັດໄຕ, ດັ່ງມີລາຍລະອຽດລຸ່ມນີ້:

1. Mr. Luc Ghislain JANSSENS, ສັນຊາດ ອາເມລິກາ, P/P No. 057382821.
2. Ms. Siobhan Mary MC NALLY, ສັນຊາດ ອາເມລິກາ, P/P No. 503626821.
3. Mr. Mark James LIPONIS, ສັນຊາດ ອາເມລິກາ, P/P No. 440104032.
4. Mr. Ian Mark ZLOTOLOW, ສັນຊາດ ອາເມລິກາ, P/P No. 511554293.
5. Ms. Vananh Thi NGUYEN, ສັນຊາດ ອາເມລິກາ, P/P No. 434443494.
6. Mr. William James MC CLURE, ສັນຊາດ ອາເມລິກາ, P/P No. 477016182.

ດັ່ງນັ້ນ, ຈຶ່ງສະເໜີມາຍັງທ່ານ ເພື່ອຄົ້ນຄ້ວາພິຈາລະນາ ຕາມທາງຄວນດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ລັດຖະມົນຕີວ່າການກະຊວງສາທາລະນະສຸກ

ຮສ.ດຣ. ບຸນກອງ ສີຫາວົງ

### 3.5 The agreement letter of Administration Office Department, Ministry of Foreign Affair

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

002150

<u>ກະຊວງການຕ່າງປະເທດ</u>

ເລກທີ:................../ຕປທ.ຈສກ.3.11
ນະຄອນຫຼວງວຽງຈັນ, ວັນທີ 16 ທັນວາ 2014

**ຮຽນ:** ຫົວໜ້າຫ້ອງການກະຊວງສາທາລະນະສຸກ,
<u>ທີ່ ນະຄອນຫຼວງວຽງຈັນ.</u>

**ເລື່ອງ:** ການອະນຸມັດໃຫ້ທີມແພດຂອງມູນນິທິຟື້ນຟູສຸຂະພາບລາວ (LRF) ເຂົ້າມາເຄື່ອນໄຫວກວດສຸຂະພາບ ຢູ່ແຂວງຜົ້ງສາລີ.

ກະຊວງການຕ່າງປະເທດຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ, ໂດຍອີງຕາມໜັງສືສະເໜີຂອງກະຊວງສາທາລະນະສຸກ, ສະບັບເລກທີ 267/ສທ, ລົງວັນທີ 5 ທັນວາ 2014, ກະຊວງການຕ່າງປະເທດເຫັນດີອະນຸມັດໃຫ້ກະຊວງສາທາລະນະສຸກຮັບເອົາທີມແພດອົງການ LRF ເພື່ອເຂົ້າມາໃຫ້ບໍລິການກວດສຸຂະພາບ ແລະ ປິ່ນປົວພະຍາດແຂ້ວ, ຫູ-ດັງ-ຄໍາ ໂດຍບໍ່ໄດ້ເສຍຄ່າ ໃຫ້ແກ່ປະຊາຊົນທີ່ເມືອງຍອດອູ, ເມືອງສໍາພັນ, ເມືອງບຸນເໜືອ ແຂວງຜົ້ງສາລີ. ຊຶ່ງທີມແພດຂອງ LRF ຈະສົມທົບກັບທີມແພດໂຮງໝໍແຂວງອຸດົມໄຊ ແລະ ຜົ້ງສາລີ, ຊ່ຽວຊານຈາກສູນປິ່ນປົວ ແລະ ຮັກສາສຸຂະພາບຕາ, ໂດຍຈະດໍາເນີນການບໍລິການປິ່ນປົວດັ່ງກ່າວໃນລະຫວ່າງວັນທີ 3 – 11 ກຸມພາ 2015 ຕາມການສະເໜີ.

ດັ່ງນັ້ນ, ກະຊວງການຕ່າງປະເທດ ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະຈັດຕັ້ງປະຕິບັດໃຫ້ສໍາເລັດຕາມແຜນການຕາມທາງຄວນດ້ວຍ.

ຫົວໜ້າຫ້ອງການ

<u>ສໍາເນົາສົ່ງ</u>:
- ຫ້ອງວ່າການປົກຄອງແຂວງ ແລະ ພະແນກການຕ່າງປະເທດແຂວງຜົ້ງສາລີ ບ່ອນລະ 1 ສະບັບ